ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**********************

ອົງການໄອຍະການປະຊາຊົນສູງສຸດ

ເລກທີ 004 /ອອປສ

ນະຄອນຫຼວງວຽງຈັນ, ວັນທີ 16 ສິງຫາ 2012

# ຄໍາແນະນໍາເພີ່ມເຕີມ

## ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ

ເຖິງ: - ຫົວໜ້າອົງການໄອຍະການປະຊາຊົນ ພາກ, ຫົວໜ້າອົງການໄອຍະການປະຊາຊົນ ແຂວງ, ນະຄອນຫລວງ, ຫົວໜ້າອົງການໄອຍະການປະຊາຊົນ ເຂດ

– ຫົວໜ້າອົງການໄອຍະການທະຫານ ພາກ, ຫົວໜ້າອົງການໄອຍະການທະຫານ ແຂວງ, ນະຄອນຫລວງ, ກອງພົນ, ກອງພັນໃຫຍ່, ໂຮງຮຽນ ທົ່ວປະເທດ

ເລື່ອງ: ການຮ່ວມມືກັນໂດຍກົງທາງດ້ານກົດໝາຍໃນບັນຫາທາງອາຍາລະຫວ່າງອົງການໄອຍະການປະຊາຊົນບັນດາແຂວງທີ່ມີຊາຍແດນຮ່ວມກັນ ລາວ-ຫວຽດນາມ

– ອີງຕາມ: ຄໍາແນະນໍາຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດວ່າດ້ວຍການຮ່ວມມືກັນໂດຍກົງທາງດ້ານກົດໝາຍໃນບັນຫາທາງອາຍາ ລາວ-ຫວຽດນາມ, ສະບັບເລກທີ 002/ອອປສ, ສະບັບລົງ ວັນທີ 9 ມັງກອນ 2012;

– ອີງຕາມ: ບົດບັນທຶກກອງປະຊຸມປຶກສາຫາລື ລະຫວ່າງ ຄະນະຜູ້ແທນອົງການໄອຍະການປະຊາຊົນແຫ່ງ ສປປ ລາວ ແລະ ຄະນະຜູ້ແທນອົງການໄອຍະການປະຊາຊົນ ແຫ່ງ ສສ ຫວຽດນາມ, ລົງນາມວັນທີ 19 ມິຖຸນາ 2012 ທີ່ນະຄອນຫລວງວຽງຈັນ;

ເພື່ອຮັບປະກັນໃຫ້ການຮ່ວມມືກັນໂດຍກົງໃນບັນຫາທາງອາຍາ ລະຫວ່າງ ອົງການໄອຍະການປະຊາຊົນບັນດາແຂວງທີ່ມີຊາຍແດນຮ່ວມກັນ ລາວ-ຫວຽດນາມ ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງຖືກຕ້ອງ ແລະ ມີປະສິດທິຜົນ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ອອກຄໍາແນະນໍາເພີ່ມເຕີມດັ່ງນີ້:

1) ພາຍຫລັງໄດ້ຮັບຄໍາຮ້ອງຂໍຄວາມຊ່ວຍເຫຼືອດ້ານຍຸຕິທໍາຈາກອົງການຈັດຕັ້ງ ຫຼື ທ້ອງຖິ່ນກ່ຽວຂ້ອງຂອງຝ່າຍ ສສ ຫວຽດນາມແລ້ວ ໃຫ້ປະຕິບັດຄໍາຮ້ອງຂໍຢ່າງຮີບດ່ວນ ໂດຍຮັບປະກັນທັນກັບກໍານົດເວລາຂອງການດໍາເນີນຄະດີ;
2) ໃຫ້ແຕ່ງຕັ້ງພະນັກງານຮັບຜິດຊອບສະເພາະການຮ່ວມມືດ້ານຍຸຕິທໍາ ໂດຍມີການຊີ້ນໍາຂອງຄະນະນໍາອົງການໄອຍະການຂັ້ນຂອງຕົນ ໂດຍເອົາຫ້ອງການເປັນໃຈກາງປະສານງານໃນວຽກງານດັ່ງກ່າວ ຕາມຂໍ້

19) ຂອງ ຂໍ້ I. ຂອງຄຳແນະນຳຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ສະບັບເລກທີ 002/ອອປສ, ສະບັບລົງວັນທີ 9 ມັງກອນ 2012 ແລ້ວລາຍງານຊື່, ຕຳແໜ່ງຂອງຜູ້ຊີ້ນຳ, ພະນັກງານຮັບຜິດຊອບ ແລະ ບ່ອນປະສານງານວຽກງານດັ່ງກ່າວມາໃຫ້ຫ້ອງການອົງການໄອຍະການປະຊາຊົນສູງສຸດ ເພື່ອເກັບກຳ ແລະ ແຈ້ງໃຫ້ຝ່າຍຫວຽດນາມ ຮັບຊາບນຳ;

3) ໃນການຮ້ອງຂໍການຮ່ວມມືທາງຍຸຕິທຳ ລະຫວ່າງ ອົງການໄອຍະການປະຊາຊົນ ສປປ ລາວ ແລະ ອົງການໄອຍະການປະຊາຊົນ ສສ ຫວຽດນາມນັ້ນ ໃຫ້ນຳໃຊ້ພາສາປະເທດຂອງຕົນ ຊຶ່ງ ສປປ ລາວ ກໍນຳໃຊ້ພາສາ ລາວ ແລະ ສສ ຫວຽດນາມ ກໍນຳໃຊ້ພາສາ ຫວຽດນາມ, ແຕ່ຕ້ອງມີການແປເປັນພາສາ ລາວ ຫລື ພາສາ ຫວຽດນາມ ປະກອບໄປນຳ ເປັນ 2 ຊຸດ ເພື່ອຮັບປະກັນກຳນົດເວລາການດຳເນີນຄະດີ ແລະ ຄວາມຖືກຕ້ອງຂອງການແປ;

4) ໃຫ້ແລກປ່ຽນຂໍ້ມູນຂ່າວສານກັບຝ່າຍຫວຽດນາມ ຢ່າງເປັນປົກກະຕິ ໂດຍອົງການໄອຍະການປະຊາຊົນທີ່ມີຊາຍແດນຮ່ວມກັນ ລາວ-ຫວຽດນາມ ສາມາດຮ້ອງຂໍໃຫ້ລາຍງານກ່ຽວກັບການປະຕິບັດການຮ້ອງຂໍການຊ່ວຍເຫລືອດ້ານຍຸຕິທຳໃຫ້ຕົນຊາບ ເວລາໃດກໍໄດ້;

5) ການມອບຮັບຜົນຂອງການຊ່ວຍເຫລືອ ຕາມຂໍ້ 12), 13) ແລະ 14) ຂອງຂໍ້ I. ຂອງຄຳແນະນຳຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ສະບັບເລກທີ 002/ອອປສ, ສະບັບລົງວັນທີ 9 ມັງກອນ 2012 ນັ້ນ, ຕ້ອງເຮັດເປັນສາມສະບັບ, ສະບັບໜຶ່ງ ສົ່ງໃຫ້ອົງການທີ່ຮ້ອງຂໍ, ສະບັບໜຶ່ງ ສົ່ງໃຫ້ຫ້ອງການອົງການໄອຍະການປະຊາຊົນສູງສຸດ ແລະ ອີກສະບັບໜຶ່ງ ເກັບມ້ຽນໄວ້.

ວິທີການແຈ້ງຜົນຂອງການຮ້ອງຂໍ ໃຫ້ສົ່ງທາງໄປສະນີ. ໃນກໍລະນີທີ່ຜົນຂອງການຊ່ວຍເຫລືອເປັນຫລັກຖານທາງດ້ານວັດຖຸ ຫລື ເອກະສານສຳຄັນທີ່ສຸດ ຕ້ອງແຈ້ງໃຫ້ອົງການຮ້ອງຂໍມາຮັບເອົາຫລັກຖານ ດ້ວຍຕົນເອງ.

ດັ່ງນັ້ນ, ຈຶ່ງແນະນຳເພີ່ມເຕີມມາຍັງອົງການໄອຍະການຂັ້ນຕ່າງໆ ເພື່ອຈັດຕັ້ງປະຕິບັດໃຫ້ຖືກຕ້ອງຕາມທີ່ກົດໝາຍ ສປປ ລາວ ແລະ ສົນທິສັນຍາ ໄດ້ກຳນົດໄວ້.

ຫົວໜ້າອົງການໄອຍະການປະຊາຊົນສູງສຸດ

ຄຳສານ ສຸວົງ